ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------===000===-----------

ກະຊວງການເງິນ

ເລກທີ: 3448 /ກງ.

ນະຄອນຫຼວງວຽງຈັນ, ວັນທີ 26 ຕຸລາ 2018

## ແຈ້ງການ

ເຖິງ: ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ, ບັນດາຫົວໜ່ວຍທຸລະກິດ, ບັນດາບຸກຄົນ, ນິຕິບຸກຄົນ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການຈັດຕັ້ງປະຕິບັດ ບັນຊີຫຼຸດຜ່ອນອັດຕາພາສີ ໃນກອບສັນຍາການຄ້າເສລີອາຊຽນ-ຈີນ ຕາມສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2017 (AHTN 2017).

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2018;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍ ການປະກາດໃຊ້ ສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2017 (AHTN 2017)ສະບັບເລກທີ 122/ນຍ, ລົງວັນທີ 03 ເມສາ 2018;
- ອີງຕາມ ບົດລາຍງານ ຂອງ ກົມພາສີ ສະບັບເລກທີ 06141/ກພສ, ລົງວັນທີ 17 ຕຸລາ 2018.

ເພື່ອເປັນການຜັນຂະຫຍາຍເນື້ອໃນຂອງ ດຳລັດວ່າດ້ວຍການປະກາດໃຊ້ສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2017 (ASEAN Harmonized Tariff Nomenclature ~ AHTN 2017), ຮັບປະກັນການຈັດຕັ້ງປະຕິບັດພັນທະສັນຍາຂອງ ສປປ ລາວ ພາຍໃຕ້ກອບສັນຍາການຄ້າເສລີອາຊຽນ-ຈີນ (ASEAN-China Free Trade Agreement ~ACFTA) ແນໃສ່ການອຳນວຍຄວາມສະດວກທາງດ້ານການຄ້າ, ຄວາມເປັນເອກະພາບກັນໃນການຈັດລະຫັດສິນຄ້າ, ເຄື່ອງຂອງ ແລະ ການຈັດເກັບອັດຕາພາສີແລະພັນທະອື່ນ ໃນຂອບເຂດທົ່ວປະເທດ ແລະ ສອດຄ່ອງກັບຫຼັກການສາກົນ,

**ລັດຖະມົນຕີກະຊວງການເງິນ ອອກແຈ້ງການ ດັ່ງນີ້:**

1. ບັນຊີຫຼຸດຜ່ອນອັດຕາພາສີ (Tariff Reduction Schedule ~ TRS) ໃນກອບສັນຍາ ACFTA ແມ່ນໃຫ້ນຳໃຊ້ສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2017 (AHTN 2017) ປ່ຽນແທນສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2012 (AHTN 2012);
2. ບັນຊີຫຼຸດຜ່ອນອັດຕາພາສີ ພາຍໃຕ້ກອບສັນຍາ ACFTA ຕາມ AHTN2017 ປະກອບມີ 10,813 ລະຫັດ (08 ຕົວເລກ) ປະກອບດ້ວຍ: ອັດຕາພາສີ 0% ຈຳນວນ 10,037 ລະຫັດ, 5% ຈຳນວນ 242 ລະຫັດ, 10%-20% ຈຳນວນ 66 ລະຫັດ, 30%-40% ຈຳນວນ 455 ລະຫັດ ແລະ 'ຫ້າມນຳເຂົ້າ' ຈຳນວນ 13 ລະຫັດ;
3. ມອບໃຫ້ກົມພາສີອອກບົດແນະນຳລະອຽດກ່ຽວກັບການຈັດຕັ້ງປະຕິບັດ ບັນຊີຫຼຸດຜ່ອນອັດຕາພາສີ ພາຍໃຕ້ກອບສັນຍາ ACFTA ຕາມ AHTN 2017 ພ້ອມທັງຈັດຝຶກອົບຮົມໃຫ້ເຈົ້າໜ້າທີ່ພາສີ, ຜູ້ປະກອບການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮັບຊາບ ແລະ ເຂົ້າໃຈ;
4. ບັນຊີຫຼຸດຜ່ອນອັດຕາພາສີ ພາຍໃຕ້ກອບສັນຍາ ACFTA ຕາມ AHTN 2017 ມີຜົນບັງຄັບໃຊ້ຍ້ອນຫຼັງນັບແຕ່ ວັນທີ 01 ກໍລະກົດ 2018 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີກະຊວງການເງິນ